ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2987/ ຮສສ

ນະຄອນຫຼວງວຽງຈັນ, ວັນທີ 20/08/2008

**ຄຳສັ່ງແນະນຳ**

**ການຈັດຕັ້ງປະຕິບັດດຳລັດ**

**ວ່າດ້ວຍ ການແກ້ໄຂບຳນານຄືນ ເລກທີ 241/ນຍ**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 241/ນຍ, ລົງວັນທີ 29/08/2007ວ່າດ້ວຍ ການແກ້ໄຂບຳນານຄືນ.
- ເພື່ອເປັນເອກະພາບ ແລະ ເຂົ້າໃຈຕໍ່ເນື້ອໃນ ວິທີການຈັດຕັ້ງປະຕິບັດດຳລັດສະບັບດັ່ງກ່າວນີ້ ໄດ້ຮັບຜົນດີໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ ອອກຄຳແນະນຳ**

I. <u>ວ່າດ້ວຍເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍບຳນານຄືນ:</u>

ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍບຳນານຄືນຕາມດຳລັດ 241/ນຍ, ລົງວັນທີ 29/08/2007 ມີຄື:

1. ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ທີ່ເຂົ້າການປະຕິວັດກ່ອນວັນທີ 2 ທັນວາ 1975, ຊຶ່ງຜູ້ທີ່ໄດ້ອອກພັກການ ມີເງື່ອນໄຂຮັບບຳນານແຕ່ໄດ້ຮັບອຸດໜູນເທື່ອດຽວ.
2. ຜູ້ທີ່ຖືກແຕ່ງຕັ້ງ ຫຼື ມອບໝາຍໂດຍອົງການຈັດຕັ້ງພັກ-ລັດໃຫ້ໄປເຮັດວຽກຢູ່ລັດວິສາຫະກິດໃດ ໜຶ່ງທີ່ໄດ້ອອກພັກຜ່ອນແຕ່ປີ 1994 ຄືນຫຼັງ.
3. ກໍລະນີພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຜູ້ທີ່ອອກການດ້ວຍຮູບການປະລະໜ້າທີ່ ຊຶ່ງກົມກອງກ່ຽວຂ້ອງບໍ່ອະນຸຍາດ ແມ່ນບໍ່ໄດ້ຮັບການພິຈາລະນາແຕ່ຢ່າງໃດ.

II. <u>ເງື່ອນໄຂການຮັບບຳນານຄືນ.</u>

1. ຜູ້ທີ່ຈະໄດ້ຮັບບຳນານຄືນຕ້ອງມີເງື່ອນໄຂດັ່ງນີ້:

- ເພດຍິງທີ່ມີອາຍຸກະສຽນ 50 ປີ ຂຶ້ນໄປ, ເພດຊາຍທີ່ມີອາຍຸກະສຽນ 55 ປີ ຂຶ້ນໄປ ຊຶ່ງຄິດໄລ່ເອົາ ມື້ເກີດເຖິງມື້ອອກພັກການ ຫຼື ຮັບອຸດໜູນເທື່ອດຽວ, ອາຍຸການ 20 ປີຂຶ້ນໄປ ໂດຍນັບເອົາມື້ເຂົ້າ ເປັນພະນັກງານສັງກັດລັດເຖິງມື້ອອກການ.
- ສຳລັບຜູ້ທີ່ມີອາຍຸການ 25 ປີ ຂຶ້ນໄປ ແຕ່ອາຍຸກະສຽນບໍ່ເຖິງ 1-3 ປີ ຫາກວ່າຜູ້ກ່ຽວມີບັດເສຍ ອົງຄະຍ້ອນການສູ້ຮົບ, ຮັບໃຊ້ສູ້ຮົບ, ເຮັດວຽກຕິດພັນກັບທາດເບື່ອ ຫຼື ເປັນພະຍາດຊຳເຮື້ອ ໃນໄລຍະປະຈຳການຈະໄດ້ຮັບການພິຈາລະນາເປັນກໍລະນີພິເສດ.

2. ການທຽບຊັ້ນ-ຂັ້ນເງິນເດືອນຂອງຜູ້ທີ່ມີເງື່ອນໄຂຮັບບຳນານຄືນ:

+ ການຈັດຊັ້ນແລະ ຂັ້ນເງິນເດືອນຂອງພະນັກງານໃນອົງການຈັດຕັ້ງຂອງພັກ-ລັດແລະ ອົງການ ການຈັດຕັ້ງມະຫາຊົນຕາມມະຕິກົມການເມືອງສູນກາງພັກ ສະບັບເລກທີ 72/ກມສພ, ລົງວັນ ທີ 13/12/1993 ແລະ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການທຽບຊັ້ນ ແລະ ຂັ້ນຂອງລັດ

ຖະກອນ ສະບັບເລກທີ 172/ນຍລົງວັນທີ 11/8/2005, ຜູ້ທີ່ໄດ້ເຂົ້າສັງກັດລັດກ່ອນວັນທີ 2 ທັນວາ 1975.

+ ການຫຼຸບຊັ້ນ-ຂັ້ນເງິນເດືອນຂອງຜູ້ທີ່ມີເງື່ອນໄຂຮັບບໍານານຄືນໃນກໍາລັງປະກອບອາວຸດ: ການຫຼຸບຊັ້ນ - ຂັ້ນເງິນເດືອນ ຂອງຜູ້ທີ່ມີເງື່ອນໄຂໄດ້ຮັບບໍານານຄືນ ໃນກໍາລັງປະກອບອາວຸດ ແມ່ນໃຫ້ປະຕິບັດຕາມດໍາລັດ ວ່າດ້ວຍດັດສະນີເງິນເດືອນພື້ນຖານຂອງກໍາລັງປະກອບອາວຸດ ສະບັບເລກທີ 253/ນຍ, ລົງວັນທີ 12/8/2005 ຜູ້ທີ່ສັງກັດລັດ ກ່ອນວັນທີ 2 ທັນວາ 1975 ໃຫ້ປະຕິບັດຕາມຕາຕະລາງດັ່ງລຸ່ມນີ້:

| ລ/ດ | ຊັ້ນນາຍ ແລະ ພົນທະຫານ | ຈໍານວນດັດສະນີ | ຊັ້ນ-ຂັ້ນເງິນເດືອນ |
|---|---|---|---|
| 1 | ພົນເອກ | 485 | 6/3 |
| 2 | ພົນໂທ | 450 | 6/2 |
| 3 | ພົນຕີ | 425 | 6/1 |
| 4 | ພົນຈັດຕະວາ | 399 | 5/13 |
| 5 | ພັນເອກ | 333 | 5/7 |
| 6 | ພັນໂທ | 315 | 4/13 |
| 7 | ພັນຕີ | 288 | 4/10 |
| 8 | ຮ້ອຍເອກ | 254 | 4/6 |
| 9 | ຮ້ອຍໂທ | 233 | 4/3 |
| 10 | ຮ້ອຍຕີ | 219 | 4/1 |
| 11 | ວາທີ | 205 | 3/7 |
| 12 | ສິບເອກ | 195 | 3/5 |
| 13 | ສິບໂທ | 180 | 2/10 |
| 14 | ສິບຕີ | 156 | 2/4 |
| 15 | ຊັ້ນ 1 | 150 | 1/10 |
| 16 | ຊັ້ນ 2 | 144 | 1/8 |

III. ວ່າດ້ວຍການຄິດໄລ່ໃຫ້ເງິນເປີເຊັນບໍານານແມ່ນຄິດໄລ່ຕາມ 2 ໄລຍະຂອງການປະຕິວັດຄື:

+ ໄລຍະທີ 1: ສໍາລັບພະນັກງານທີ່ເຂົ້າສັງກັດລັດແຕ່ປີ 1954 ຄືນຫຼັງຈະໄດ້ຮັບເງິນອຸດໜູນບໍານານເຊິ່ງຄິດໄລ່ຕາມຕາຕະລາງດັ່ງນີ້:

| ລ/ດ | ຈໍານວນປີການ | ລະດັບເງິນສ່ວນຮ້ອຍບໍານານ |
|---|---|---|
| 1 | ອາຍຸການ 20 ປີ | 80% ຂອງເງິນເດືອນຕາມຊັ້ນ |
| 2 | ອາຍຸການ 21 ປີ | 81% ຂອງເງິນເດືອນຕາມຊັ້ນ |
| 3 | ອາຍຸການ 22 ປີ | 82% ຂອງເງິນເດືອນຕາມຊັ້ນ |
| 4 | ອາຍຸການ 23 ປີ | 83% ຂອງເງິນເດືອນຕາມຊັ້ນ |
| 5 | ອາຍຸການ 24 ປີ | 84% ຂອງເງິນເດືອນຕາມຊັ້ນ |
| 6 | ອາຍຸການ 25ປີ | 85% ຂອງເງິນເດືອນຕາມຊັ້ນ |

| | | |
|---|---|---|
| 7 | ອາຍຸການ 26 ປີ | 86% ຂອງເງິນເດືອນຕາມຂັ້ນ |
| 8 | ອາຍຸການ 27 ປີ | 87% ຂອງເງິນເດືອນຕາມຂັ້ນ |
| 9 | ອາຍຸການ 28 ປີ | 88% ຂອງເງິນເດືອນຕາມຂັ້ນ |
| 10 | ອາຍຸການ 29 ປີ | 89% ຂອງເງິນເດືອນຕາມຂັ້ນ |
| 11 | ອາຍຸການ 30 ປີ | 90% ຂອງເງິນເດືອນຕາມຂັ້ນ |
| 12 | ອາຍຸການ 31 ປີ | 91% ຂອງເງິນເດືອນຕາມຂັ້ນ |
| 13 | ອາຍຸການ 32 ປີ | 92% ຂອງເງິນເດືອນຕາມຂັ້ນ |
| 14 | ອາຍຸການ 33 ປີ | 93% ຂອງເງິນເດືອນຕາມຂັ້ນ |
| 15 | ອາຍຸການ 34 ປີ | 94% ຂອງເງິນເດືອນຕາມຂັ້ນ |
| 16 | ອາຍຸການ 35 ປີ | 95% ຂອງເງິນເດືອນຕາມຂັ້ນ |
| 17 | ອາຍຸການ 36 ປີ | 96% ຂອງເງິນເດືອນຕາມຂັ້ນ |
| 18 | ອາຍຸການ 37 ປີ | 97% ຂອງເງິນເດືອນຕາມຂັ້ນ |
| 19 | ອາຍຸການ 38 ປີ | 98% ຂອງເງິນເດືອນຕາມຂັ້ນ |
| 20 | ອາຍຸການ 39ປີ | 99% ຂອງເງິນເດືອນຕາມຂັ້ນ |
| 21 | ອາຍຸການ 40ປີ | 100% ຂອງເງິນເດືອນຕາມຂັ້ນ |

+ ໄລຍະທີ 2: ສຳລັບພະນັກງານທີ່ເຂົ້າສັງກັດລັດແຕ່ປີ 1955 ແລະ ກ່ອນວັນທີ 2 ທັນວາ 1975 ຈະໄດ້ ຮັບເງິນເປີເຊັນບຳນານຕາມຕາຕະລາງດັ່ງນີ້:

| ລ/ດ | ຈຳນວນປີການ | ລະດັບເງິນສ່ວນຮ້ອຍບຳນານ |
|---|---|---|
| 1 | ອາຍຸການ 20 ປີ | 75% ຂອງເງິນເດືອນຕາມຂັ້ນ |
| 2 | ອາຍຸການ 21 ປີ | 76% ຂອງເງິນເດືອນຕາມຂັ້ນ |
| 3 | ອາຍຸການ 22 ປີ | 77% ຂອງເງິນເດືອນຕາມຂັ້ນ |
| 4 | ອາຍຸການ 23 ປີ | 78% ຂອງເງິນເດືອນຕາມຂັ້ນ |
| 5 | ອາຍຸການ 24 ປີ | 79% ຂອງເງິນເດືອນຕາມຂັ້ນ |
| 6 | ອາຍຸການ 25ປີ | 80% ຂອງເງິນເດືອນຕາມຂັ້ນ |
| 7 | ອາຍຸການ 26 ປີ | 81% ຂອງເງິນເດືອນຕາມຂັ້ນ |
| 8 | ອາຍຸການ 27 ປີ | 82% ຂອງເງິນເດືອນຕາມຂັ້ນ |
| 9 | ອາຍຸການ 28 ປີ | 83% ຂອງເງິນເດືອນຕາມຂັ້ນ |
| 10 | ອາຍຸການ 29 ປີ | 84% ຂອງເງິນເດືອນຕາມຂັ້ນ |
| 11 | ອາຍຸການ 30 ປີ | 85% ຂອງເງິນເດືອນຕາມຂັ້ນ |
| 12 | ອາຍຸການ 31 ປີ | 86% ຂອງເງິນເດືອນຕາມຂັ້ນ |
| 13 | ອາຍຸການ 32 ປີ | 87% ຂອງເງິນເດືອນຕາມຂັ້ນ |
| 14 | ອາຍຸການ 33 ປີ | 88% ຂອງເງິນເດືອນຕາມຂັ້ນ |
| 15 | ອາຍຸການ 34 ປີ | 89% ຂອງເງິນເດືອນຕາມຂັ້ນ |
| 16 | ອາຍຸການ 35 ປີ | 90% ຂອງເງິນເດືອນຕາມຂັ້ນ |

ຕົວຢ່າງ: ທ້າວ ກ ເກີດປີ 1935 ວັນເດືອນປີເຂົ້າສັງກັດລັດ 1957, ອອກພັກການປີ 1990 ຕຳແໜ່ງສຸດທ້າຍ ກຳມະການພັກເມືອງ, ຊັ້ນ 3 ຂັ້ນ 3 ( 3/3 )

- ລວມອາຍຸການສົມທົບ 55 ປີ.
- ລວມອາຍຸປະຕິວັດ 33 ປີ.

- ວິທີຄິດໄລ່: ຊັ້ນ 3 ຂັ້ນ 3 ດັດສະນີ 185 ຄູນ ມູນຄ່າດັດສະນີ 2.500 ກີບ ຄູນ 88% = 407.000 ກີບ

( 185 x 2.500 x 88% = 407.000 ກີບ )

## IV. ຂັ້ນຕອນ ແລະ ວິທີການພິຈາລະນາ:

1. ການປະກອບເອກະສານມີລາຍລະອຽດດັ່ງນີ້:

- ໃບຄຳຮ້ອງຂອງຜູ້ກ່ຽວຂຽນຕາມແບບຮ່າງທີ 23 ຂອງກົມບຳນານ, ເສຍອົງຄະ ແລະ ພິການ ສົ່ງໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ.
- ຊີວະປະຫວັດຂຽນແຈ້ງກ່ຽວກັບການເຄື່ອນໄຫວຂອງຕົນເອງຕາມແບບຮ່າງທີ່ກົມບຳນານ, ເສຍອົງຄະ ແລະ ພິການສົ່ງໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ.
- ຊີວະປະຫວັດເກົ່າຂອງຜູ້ກ່ຽວທີ່ຂຽນກ່ອນເວລາອອກພັກການ ( ຖ້າມີ ).
- ຂໍ້ຕົກລົງໃຫ້ອອກພັກການຮັບເງິນອຸດໜູນເທື່ອດຽວ ( ໃບປົດປ່ອຍອອກພັກການສ້າງເສດຖະກິດຄອບຄົວ ) ຫຼື ໃບຢັ້ງຢືນ ອອກການຈາກກົມກອງເກົ່າ.
- ໃບຢັ້ງຢືນ ຫຼື ໃບປະກາດສະນິຍະບັດດ້ານການສຶກສາ ແລະ ວິຊາສະເພາະຕ່າງໆ.
- ປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ ( ບັດປະຊາຊົນ ).
- ຮູບຂະໜາດ 2 x 2.5 ຈຳນວນ 2 ໃບ.
- ຕ້ອງປະກອບເອກະສານໃຫ້ຖືກຕ້ອງຕາມແບບຟອມທີ່ກົມບຳນານ, ເສຍອົງຄະ ແລະ ພິການ ສົ່ງໃຫ້ ພະແນກແຮງງານ ແລະສະຫວັດດີການສັງຄົມ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ຫ້ອງການແຮງງານເມືອງ.

2. ການເຊັນຢັ້ງຢືນເອກະສານຄື: ໃນເມື່ອຕົນເອງປະກອບເອກະສານຄົບຖ້ວນແລ້ວ ໃຫ້ຍື່ນເອກະສານ ໄປຕາມຂັ້ນຕອນດັ່ງລຸ່ມນີ້:
   - ກົມກອງເກົ່າ ຫຼື ບ່ອນໃໝ່ທີ່ຕົນສັງກັດຢູ່.
   - ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ( ເມືອງທີ່ຕົນເອງຢູ່ ).
   - ຫ້ອງການຈັດຕັ້ງເມືອງ ( ເມືອງທີ່ຕົນເອງຢູ່ ).
   - ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແລະ ຄະນະຄົ້ນຄວ້ານະໂຍບາຍຂັ້ນແຂວງ ( ແຂວງທີ່ຕົນເອງຢູ່ ).

+ ຖ້າເອກະສານສະບັບໃດບໍ່ໄດ້ຜ່ານຂັ້ນຕອນດັ່ງທີ່ກ່າວມາຂ້າງເທິງນີ້ ກະຊວງແຮງງານ ແລະສະຫວັດດີການສັງຄົມຈະບໍ່ຮັບການຄົ້ນຄວ້າພິຈາລະນາແຕ່ຢ່າງໃດ.

3. **ການຄົ້ນຄວ້າ ແລະ ພິຈາລະນາເອກະສານຂອງການຈັດຕັ້ງແຕ່ລະຂັ້ນ :**

- ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງວຽງຈັນສັງລວມ ແລະ ຄົ້ນຄ້ວາເອກະສານທັງໝົດມາຜ່ານຄະນະກຳມະການຄົ້ນຄວ້ານະໂຍບາຍຂັ້ນແຂວງ ແລະ ນະຄອນ ຫຼວງເພື່ອພິຈາລະນາຮັບຮອງ ແລ້ວສົ່ງໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ( ກົມບຳນານ, ເສຍອົງຄະ ແລະ ພິການ ).

- ຄະນະກຳມະການປະຕິບັດນະໂຍບາຍຂັ້ນສູນກາງ ຄົ້ນຄວ້າພິຈາລະນາຮັບຮອງຕໍ່ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມລະບຽບການ, ຫຼັງຈາກນັ້ນຄະນະກຳມະການປະຕິບັດນະໂຍບາຍຂັ້ນສູນກາງ ຄົ້ນຄວ້າເຫັນດີເປັນເອກະພາບກັນແລ້ວ ກົມບຳນານ, ເສຍອົງຄະ ແລະ ພິການ ຮ່າງຂໍ້ຕົກລົງເພື່ອເຊັນ ທ່ານລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈາກນັ້ນກົມບຳນານ, ເສຍອົງຄະ ແລະ ພິການຄິດໄລ່ງົບປະມານແຕ່ລະສົກປີມອບໃຫ້ອົງການປະກັນສັງຄົມແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ.

V. <u>ມາດການໃນການຈັດຕັ້ງປະຕິບັດ</u>:

1. ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກົມບຳນານ, ເສຍອົງຄະ ແລະ ພິການ) ເປັນຜູ້ຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ໃຫ້ທຸກອົງການ, ກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

2. ວິທີການຈັດຕັ້ງປະຕິບັດຕົວຈິງໃຫ້ບັນດາກະຊວງ, ຄະນະກຳມະການ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ແຂວງ, ນະຄອນຫລວງວຽງຈັນ ແລະ ພະແນກແຮງງານ ແລະສະຫວັດດີການສັງຄົມເປັນຜູ້ຮັບຜິດຊອບຕົວຈິງ ໂດຍສົມທົບກັບກົມບຳນານ, ເສຍອົງຄະ ແລະ ພິການ.

3. ໃນກໍລະນີບຸກຄົນໃດໜຶ່ງຫາກມີການປອມແປງເອກະສານໃນທາງບໍ່ຊອບທຳເພື່ອສ້າງເງື່ອນໄຂໃຫ້ແກ່ຕົນເອງໄດ້ຮັບບຳນານຄືນ ເມື່ອກວດກາພົບເຫັນຈະຖືກຖອນສິດລົບລ້າງ ແລະ ໃຫ້ໃຊ້ເງິນແທນຄືນໃຫ້ລັດຕາມຈຳນວນເງິນທີ່ຜູ້ກ່ຽວໄດ້ຮັບໄປແລ້ວນັ້ນ ພ້ອມທັງຈະຖືກດຳເນີນຄະດີຕາມກົດໝາຍ.

ການຈັດຕັ້ງໃດໜຶ່ງຫາກຢັ້ງຢືນເອກະສານທີ່ປອມແປງມາຂ້າງເທິງນີ້ ໂດຍເຈດຕະນາ ເມື່ອກວດພົບຈະຖືກກ່າວເຕືອນສຶກສາອົບຮົມ, ປົດຕຳແໜ່ງ, ໄລ່ອອກການ ຫຼື ຖືກດຳເນີນຄະດີຕາມສະຖານໜັກ ຫຼື ເບົາ.

4.ຄຳແນະນຳສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ, ຄຳແນະນຳ ແລະ ລະບຽບການທີ່ຂັດກັບຄຳແນະນຳສະບັບນີ້ ລ້ວນແຕ່ຖືກລົບລ້າງ.

<u>ໝາຍເຫດ:</u> ຜູ້ທີ່ບໍ່ມີເງື່ອນໄຂຮັບບຳນານຄືນ ຈະໄດ້ຮັບເງິນອຸດເທື່ອດຽວຕາມດຳລັດ343/ນຍ, ລົງວັນທີ 25/09/2007.

ຕ ລັດຖະມົນຕີວ່າການ

ເລົາລີ ໄຟເພັງຍືວ